ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0003 /ກປ

ນະຄອນຫຼວງວຽງຈັນ, ວັນທີ 14/01/19

## ແຈ້ງການ

ເຖິງ: ທ່ານ ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ.

ເລື່ອງ: ການປ້ອງກັນໄຟໄໝ້ລາມປ່າ ໃນລະດູແລ້ງ ແລະ ການກະກຽມ ຜະລິດເບ້ຍໄມ້, ປູກໄມ້ ແລະ ຟື້ນຟູປ່າ ປະຈຳປີ 2019.

- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2018 ວ່າດ້ວຍການເພີ່ມທະວີການຄຸ້ມຄອງການນຳໃຊ້ທີ່ດິນ ເພື່ອສຳປະທານປູກໄມ້ອຸດສາຫະກຳ ແລະ ພືດຕ່າງໆ ໃນຂອບເຂດທົ່ວປະເທດ;
- ອີງຕາມ ໜັງສືສະເໜີຂອງກົມປ່າໄມ້ ສະບັບເລກທີ 5678/ກປມ, ລົງວັນທີ 14 ທັນວາ 2018.

ເພື່ອປະຕິບັດຕາມເນື້ອໃນຈິດໃຈ ແລະ ຜັນຂະຫຍາຍ ຍຸດທະສາດປ່າໄມ້ ຮອດປີ 2020 ໃຫ້ສຳເລັດ ແລະ ປະກົດໄດ້ຜົນເປັນຈິງ, ໂດຍສະເພາະ ຄາດໝາຍສູ້ຊົນ ຂອງວຽກງານຟື້ນຟູປ່າໄມ້ ໃຫ້ມີເນື້ອທີ່ຄວາມປົກຫຸ້ມປ່າໄມ້ 70% ໃນປີ 2020 ໃນຂອບເຂດທົ່ວປະເທດ ຕະຫຼອດໄລຍະທີ່ຜ່ານມາ, ພັກ ແລະ ລັດຖະບານ ໄດ້ຖືເອົາວຽກງານຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ເປັນວຽກງານຍຸດທະສາດທີ່ສຳຄັນ ໂດຍສະເພາະແມ່ນເລັ່ງໃສ່ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້ ຕາມທິດຍືນຍົງ ດ້ວຍການອອກນິຕິກຳລຸ່ມກົດໝາຍຫຼາຍສະບັບ ກ່ຽວກັບ ການປ້ອງກັນໄຟໄໝ້ລາມປ່າ, ການສົ່ງເສີມເຕັກນິກ-ວິຊາການດ້ານ ແກ່ນພັນໄມ້, ການປູກໄມ້ ແລະ ຟື້ນຟູປ່າ ໄປຄຽງຄູ່ກັບການໂຄສະນາເຜີຍແຜ່, ປູກຈິດສຳນຶກ ໃຫ້ປະຊາຊົນ ໄດ້ຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມຢ່າງກວ້າງຂວາງ ແລະ ເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2018 ວ່າດ້ວຍການເພີ່ມທະວີການຄຸ້ມຄອງການນຳໃຊ້ທີ່ດິນ ເພື່ອສຳປະທານປູກໄມ້ອຸດສາຫະກຳ ແລະ ພືດຕ່າງໆ ໃນຂອບເຂດທົ່ວປະເທດ. ແນໃສ່ເຮັດໃຫ້ມີຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ຮັບປະກັນຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດວຽກງານ ການປ້ອງກັນໄຟໄໝ້ລາມປ່າ ແລະ ວຽກງານ ສ້າງສວນກ້າເບ້ຍໄມ້, ຜະລິດເບ້ຍໄມ້, ປູກໄມ້ ແລະ ຟື້ນຟູປ່າໄມ້ ປະຈຳປີ 2019 ບັນລຸຕາມແຜນການທີ່ວາງໄວ້ ໃຫ້ໄດ້ຮັບຜົນດີ, ມີປະສິດທິພາບ ແລະ ປະສິດທິຜົນສູງ ແລະ ແນໃສ່ເພີ່ມຄວາມປົກຫຸ້ມປ່າໄມ້ ໃຫ້ໄດ້ 70% ໃນປີ 2020.

### ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກແຈ້ງການ:

1. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການ ປະສານສົມທົບກັບພະແນກທີ່ກ່ຽວຂ້ອງພາຍໃນແຂວງຂອງຕົນ ແລະ ຊີ້ນຳຂະແໜງປ່າໄມ້, ກອງຄຸ້ມຄອງປ່າສະຫງວນ ແລະ ປ່າ

ປ້ອງກັນ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ເພື່ອເຮັດໜ້າທີ່ໂຄສະນາເຜີຍແຜ່ແນະນຳ ກ່ຽວກັບການປ້ອງກັນ ແລະ ສະກັດກັ້ນໄຟໄໝ້ລາມປ່າ ໃຫ້ປະຕິບັດ ດັ່ງນີ້:

1.1 ຈັດຕັ້ງໜ່ວຍໂຄສະນາເຜີຍແຜ່ແນະນຳ ກ່ຽວກັບ ເຕັກນິກວິຊາການ, ມາດຕະການປ້ອງກັນ ແລະ ສະກັດກັ້ນໄຟໄໝ້ລາມປ່າ ໃຫ້ປະຊາຊົນອາໄສຢູ່ໃນ ແລະ ນອກເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ທີ່ມີການເຮັດໄຮ່, ເຮັດສວນ, ທຳມາຫາກິນ ເປັນຕົ້ນແມ່ນ ການຖາງແລວກັນໄຟອ້ອມຮອບເນື້ອທີ່ໄວ້ຮັບປະກັນເສຍກ່ອນ ຈຶ່ງທຳການຈູດ ເພື່ອບໍ່ໃຫ້ແຜ່ລາມໄປເຂດອື່ນ, ການຈູດຕ້ອງຈູດຍາມແລງ ຫຼື ຍາມແດດອ່ອນ ແລະ ບໍ່ມີລົມແຮງ, ການກໍ່ກອງໄຟ ຫຼື ດັງໄຟຫຸງຕົ້ມຕ່າງໆ ຕ້ອງດັງໄຟຢູ່ບ່ອນແປນ, ດານຫີນ ຫຼື ບ່ອນທີ່ຮັບປະກັນບໍ່ໃຫ້ມີການລຸກລາມຂອງແປວໄຟ ຖ້າຢຸດເຊົາການນຳໃຊ້ໄຟແລ້ວ ຕ້ອງດັບມອດເສຍກ່ອນຈຶ່ງຈາກໄປ; ຫ້າມຈູດທົ່ງຫຍ້າ ຫຼື ທົ່ງຄັງ ເພື່ອລ້ຽງສັດ ແລະ ຫ້າມຈູດປ່າເພື່ອລ່າສັດ ຢ່າງເດັດຂາດ;

1.2 ໃນກໍລະນີເກີດໄຟໄໝ້ລາມປ່າຢູ່ເຂດໃດ ແມ່ນມອບໃຫ້ບ້ານ ຫຼື ເມືອງ ນັ້ນ ເປັນເຈົ້າການປຸກລະດົມຊ່ວຍກັນດັບມອດ. ໃນກໍລະນີໄຟໄໝ້ລາມປ່າຮຸນແຮງ ແລະ ເປັນບໍລິເວນກວ້າງ ຕ້ອງໄດ້ປະສານຫາພາກສ່ວນທີ່ກ່ຽວຂ້ອງ ຂອງເມືອງ ແລະ ແຂວງ ເພື່ອຂໍຄວາມຊ່ວຍເຫຼືອ ໃນການດັບມອດຢ່າງທັນການ.

2. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການ ປະສານສົມທົບກັບພະແນກທີ່ກ່ຽວຂ້ອງພາຍໃນແຂວງຂອງຕົນ ແລະ ຊີ້ນຳຂະແໜງປ່າໄມ້, ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ເອົາໃຈໃສ່ດັ່ງນີ້:

2.1 ເກັບກຳຄືນຂໍ້ມູນ ແຫຼ່ງແກ່ນພັນໄມ້ ທີ່ມີແລ້ວ ແລະ ແຫຼ່ງແກ່ນພັນໄມ້ທີ່ພົບໃໝ່ ພາຍໃນແຂວງຂອງຕົນ ເພື່ອກຳນົດເປັນແຜນການ ໃນການຕອບສະໜອງແກ່ນພັນໄມ້ພື້ນເມືອງ ໃນແຕ່ລະປີ ທີ່ເໝາະສົມກັບສະພາບພື້ນທີ່ ຂອງແຕ່ລະທ້ອງຖິ່ນ ເພື່ອເປົ້າໝາຍການຜະລິດເບ້ຍໄມ້ ໃຫ້ແກ່ການປູກໄມ້ ໃຫ້ຖືກຕ້ອງທັນກັບລະດູການ;

2.2 ປະສານສົມທົບກັບ ບໍລິສັດ ແລະ ຜູ້ປະກອບການ ໃນການສ້າງ ແລະ ປັບປຸງ ສວນກ້າເບ້ຍໄມ້ ແລະ ຜະລິດເບ້ຍໄມ້ ສະໜອງໃຫ້ແກ່ສັງຄົມ ນຳໄປປູກ ແລະ ຟື້ນຟູປ່າ ເພື່ອການປົກປັກຮັກສາສິ່ງແວດລ້ອມ, ປົກປັກຮັກສາແຫຼ່ງນໍ້າ, ຕ້ານການເຊາະເຈື່ອນຂອງດິນ ແລະ ປູກໄມ້ອຸດສະຫະກຳ ເພື່ອເປັນສິນຄ້າ ແລະ ເປັນວັດຖຸດິບສະໜອງ ໃຫ້ແກ່ໂຮງງານອຸດສະຫະກຳປຸງແຕ່ງໄມ້ ເພື່ອນຳໃຊ້ພາຍໃນ ແລະ ສົ່ງອອກຂາຍຕ່າງປະເທດ;

2.3 ການຜະລິດເບ້ຍໄມ້ ແມ່ນໃຫ້ເລັ່ງໃສ່ໄມ້ພື້ນເມືອງ ທີ່ເໝາະສົມກັບສະພາບພື້ນທີ່ຂອງແຕ່ລະທ້ອງຖິ່ນ ແລະ ໃຫ້ເບ້ຍໄມ້ໄວ້ ຕອບສະໜອງໃຫ້ແກ່ການປູກໄມ້ ທັນກັບລະດູການ. ສ່ວນໄມ້ອຸດສາຫະກຳ ແລະ ໄມ້ ທີ່ເປັນເສດຖະກິດ ຊຸກຍູ້ໃຫ້ຜູ້ປະກອບການ, ໂຄງການປູກໄມ້ອຸດສະຫະກຳ ປູກໃນເນື້ອທີ່ດິນປ່າຊຸດໂຊມ, ທີ່ດິນປ່າປອກໂຫຼ້ນ ແລະ ດິນເປົ່າຫວ່າງ ທີ່ລັດຈັດສັນໃຫ້;

2.4 ເພີ່ມທະວີຄວາມຮັບຜິດຊອບຕໍ່ການປະຕິບັດຕົວເລກຄາດໝາຍແຜນການ ປີ 2019 ທີ່ກະຊວງກະສິກຳ ແລະ ປ່າໄມ້ ມອບໝາຍໃຫ້ ໂດຍມີການຕິດຕາມ, ການກວດກາ ແລະ ເກັບກຳຂໍ້ມູນເນື້ອທີ່ປ່າໄມ້ ທີ່ໄດ້ຮັບການປູກໄມ້ ແລະ ຟື້ນຟູປ່າແບບທຳມະຊາດ ໄປພ້ອມກັບການກຳນົດຂອບເຂດ, ປັກຫຼັກໝາຍ ແລະ ຕິດປ້າຍເຂດປູກໄມ້ ແລະ ຟື້ນຟູປ່າແບບທຳມະຊາດ ໃຫ້ຈະແຈ້ງ ແລະ ຊັດເຈນ.

3. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ຄົ້ນຄ້ວານຳສະເໜີຕໍ່ອົງການປົກຄອງທ້ອງຖິ່ນ ໃນຂັ້ນຂອງຕົນ ເພື່ອແຕ່ງຕັ້ງຄະນະຮັບຜິດຊອບວຽກງານປູກໄມ້ ແລະ ຟື້ນຟູປ່າ ໂດຍແມ່ນຂະແໜງການກະສິກຳ ແລະ ປ່າໄມ້ ເປັນໃຈກາງ ແລະ ມີການເຂົ້າຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ຕາມຄວາມເໝາະສົມ, ພ້ອມທັງມອບໝາຍຄວາມຮັບຜິດຊອບຂາດຕົວ ໃຫ້ແກ່ຂະແໜງປ່າໄມ້, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຈັດຕັ້ງວຽກງານສົ່ງເສີມປູກໄມ້ ແລະ ລົງທຶນປູກໄມ້ ໂດຍມີການແຕ່ງຕັ້ງພະນັກງານວິຊາການ ເພື່ອລົງຊຸກຍູ້ສົ່ງເສີມແນະນຳເຕັກນິກວິຊາການປູກ, ບົວລະບັດ, ປົກປັກຮັກສາຕົ້ນໄມ້ທີ່ປູກໄປແລ້ວໃຫ້ເຕີບໃຫຍ່,

ຮັກສາອັດຕາການຫຼອດຕາຍຂອງເບັ້ຍໄມ້ ແລະ ດໍາເນີນການປູກທົດແທນຕົ້ນໄມ້ທີ່ຕາຍ ໃຫ້ບັນດາໂຄງການປູກໄມ້ຂອງລັດ, ບໍລິສັດ, ຜູ້ປະກອບການ ແລະ ຊາວກະສິກອນ ແນໃສ່ເຮັດໃຫ້ການປູກໄມ້ ແລະ ຟື້ນຟູປ່າທໍາມະຊາດກາຍເປັນຮູບປະທໍາ ແລະ ມີປະສິດທິຜົນກວ່າເກົ່າ;

4. ໃຫ້ ພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ ແລະ ນະຄອນຫຼວງວຽງຈັນ ຊີ້ນໍາຂະແໜງປ່າໄມ້ ກະກຽມ ແລະ ກໍານົດສະຖານທີ່ ທີ່ເຫັນວ່າເໝາະສົມ ສໍາລັບເປັນບ່ອນວາງສະແດງເບັ້ຍໄມ້ ແລະ ສ້າງຂະບວນການເນື່ອງໃນວັນເດັກນ້ອຍສາກົນ ວັນທີ 01 ມິຖຸນາ 2019 ດ້ວຍການກໍານົດບັນກິດຈະກໍາທີ່ຈະເຄື່ອນໄຫວໃນງານດັ່ງກ່າວນີ້ ເປັນຕົ້ນແມ່ນ ຂະບວນການວາງສະແດງສິນລະປະ, ຂັບລໍາ, ຮ້ອງເພັງ ແລະ ຟ້ອນ, ການສະແດງຕ່າງໆ ໂດຍຕິດພັນກັບ ການປູກຈິດສໍານຶກໃຫ້ອານຸຊົນ ແລະ ເຍົາວະຊົນ ເຫັນໄດ້ຄວາມສໍາຄັນຂອງປ່າໄມ້, ການປູກໄມ້ຟື້ນປ່າ ເພື່ອອານາຄົດ ແລະ ຄືນຄວາມສີຂຽວ ເພື່ອປົກປັກຮັກສາສິ່ງແວດລ້ອມ; ພ້ອມດຽວກັນນັ້ນ, ກໍໃຫ້ປຸກລະດົມບັນດາຫ້ອງການກະສິກໍາ ແລະ ປ່າໄມ້ ປະຈໍາເມືອງ ແລະ ຜູ້ປະກອບການທີ່ກ້າເບັ້ຍໄມ້ ໃນທຸກໆພາກສ່ວນນໍາເອົາເບັ້ຍໄມ້ (ໄມ້ພື້ນເມືອງ, ໄມ້ເສດຖະກິດ, ໄມ້ໃຫ້ໝາກ ແລະ ໄມ້ປະດັບ) ທຸກຊະນິດ ເພື່ອວາງສະແດງໃນງານດັ່ງກ່າວ;

5. ໃຫ້ ກົມປ່າໄມ້, ພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການໂຄສະນາເຜີຍແຜ່ບັນດານະໂຍບາຍ ແລະ ກົດໝາຍ, ລະບຽບການ ກ່ຽວກັບ ເຕັກນິກວິຊາການ, ມາດຕະການປ້ອງກັນ ແລະ ສະກັດກັ້ນໄຟໄໝ້ລາມປ່າ, ການປູກໄມ້, ຟື້ນຟູປ່າ ແລະ ການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ຊີວະນາໆພັນ ໂດຍຜ່ານສື່ຕ່າງໆ ເປັນຕົ້ນ ໜັງສືພິມ, ໂທລະພາບ, ວິທະຍຸ ແລະ ສື່ຕ່າງໆ ຕາມຄວາມເໝາະສົມ. ນອກຈາກນັ້ນໃຫ້ມີການຈັດກອງປະຊຸມ ປາຖະກະຖາ ແລະ ຈັດຕັ້ງຂະບວນການຕ່າງໆ ເພື່ອໃຫ້ທົ່ວປວງຊົນ ຕະຫຼອດເຖິງທະຫານ, ຕໍາຫຼວດ ແລະ ການຈັດຕັ້ງລວມໝູ່ ໄດ້ຮັບຮູ້, ເຊື່ອມຊຶມ ແລະ ເຫັນໄດ້ຄວາມສໍາຄັນຂອງວຽກງານ ປ່າໄມ້ ໂດຍສະເພາະແມ່ນ ການປ້ອງກັນ ແລະ ສະກັດກັ້ນໄຟໄໝ້ລາມປ່າ, ການປູກໄມ້, ການຟື້ນຟູປ່າທໍາມະຊາດ ແລະ ການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ຊີວະນາໆພັນ;

6. ມອບໃຫ້ ກົມປ່າໄມ້, ພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ, ນະຄອນຫຼວງວຽງຈັນ, ຂະແໜງປ່າໄມ້ແຂວງ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ປະຈໍາເມືອງ ເຮັດໜ້າທີ່ ຕິດຕາມ, ກວດກາ ແລະ ສະຫຼຸບຖອດຖອນບົດຮຽນ ກ່ຽວກັບ ການປ້ອງກັນ ແລະ ສະກັດກັ້ນໄຟໄໝ້ລາມປ່າ, ການຄຸ້ມຄອງແຫຼ່ງແກ່ນພັນ, ການສ້າງສວນກ້າ, ຜະລິດເບັ້ຍໄມ້, ການປູກໄມ້ ແລະ ການຟື້ນຟູປ່າ ພ້ອມກັນນັ້ນກໍ່ໃຫ້ ເກັບກໍາຜົນງານ ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຫື່ອແຮງ, ສະຕິປັນຍາ ແລະ ຊັບສິນ ເຂົ້າໃນການຄຸ້ມຄອງ, ປົວລະບັດຮັກສາ ແລະ ຟື້ນຟູປ່າ ລວມທັງການປ້ອງກັນປ່າໄມ້ ບໍ່ໃຫ້ຖືກທໍາລາຍ ເພື່ອສະເໜີຂັ້ນເທິງຍ້ອງຍໍ ແລະ ປະຕິບັດນະໂຍບາຍ ຕາມກົດໝາຍ ແລະ ລະບຽບການ;

7. ພາຍຫຼັງໄດ້ຮັບແຈ້ງການ ສະບັບນີ້ແລ້ວ ໃຫ້ຮີບຮ້ອນເຜີຍແຜ່, ມອບຄວາມຮັບຜິດຊອບ ໃຫ້ຈະແຈ້ງລະອຽດ ເພື່ອຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ລາຍງານ ກະຊວງກະສິກໍາ ແລະ ປ່າໄມ້ ເພື່ອພິຈາລະນາແກ້ໄຂໂດຍໄວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດປະຕິບັດ ຕາມເນື້ອໃນຈິດໃຈທີ່ໄດ້ກ່າວມາຂ້າງເທິງ ໃຫ້ປະສົບຜົນສໍາເລັດ ແລະ ດ້ວຍຄວາມຮັບຜິດຊອບສູງ.

ລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້

ປອ.ພວງປາຣິສັກ ປຣະວົງວຽງຄໍາ

**ບ່ອນນໍາສົ່ງ:**

1. ຫ້ອງວ່າການສູນກາງພັກ — 01 ສະບັບ (ເພື່ອລາຍງານ);
2. ຫ້ອງວ່າການ ສນຍ — 01 ສະບັບ (ເພື່ອລາຍງານ);
3. ກະຊວງ ຖວທ — 01 ສະບັບ (ເພື່ອຊ່ວຍອອກຂ່າວ);
4. ຫ້ອງວ່າການປົກຄອງແຂວງ, ນວ ບ່ອນລະ 01 ສະບັບ (ເພື່ອຊ່ວຍຊີ້ນໍາ);
5. ເກັບມ້ຽນ — 01 ສະບັບ.